ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 05 /ຫກ

ນະຄອນຫຼວງວຽງຈັນ, ວັນທີ:20 ກຸມພາ 2017


ສໍານັກງານ ຄຄຊ
ເລກທີ .....0211.........
ວັນທີ 22 FEB 2017
ໂທລະສັບ 021 217770


ລາຍງານການເຄື່ອນໄຫວປະຈໍາອາທິດ

ທີ **30/01/-03/02/2017** ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,46% ທຽບເງິນເອີໂຣ ເນື່ອງຈາກຕົວເລກການຂະຫຍາຍຕົວທາງເສດຖະກິດຂອງສະຫະລັດອາເມລິກາໃນໄຕມາດ 4/2016 ຂະຫຍາຍຕົວພຽງແຕ່ 1,9% ຊຶ່ງນ້ອຍກວ່າທີ່ຄາດຄະເນໄວ້ 2,1% ເຮັດໃຫ້ນັກລົງທຶນຫັນໄປຖືຄອງສັນຍາຄໍາເພີ່ມຂຶ້ນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 23-27/01/2017 | ອາທິດນີ້ 30/01/-03/02/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0691 | 1,0740 | -0,46% |
| ໂດລາ/ເຢນ | 114,96 | 113,10 | 1,64% |
| ໂດລາ/ບາດ | 35,270 | 35,070 | 0,57% |
| ໂດລາ/ເປໂຊ | 49,76 | 49,86 | -0,21% |
| ໂດລາ/ຣູເປັຍ | 13.357,0 | 13.340,00 | 0,13% |
| ໂດລາ/ໂດລາສິງກະໂປ | 1,4265 | 1,4141 | 0,88% |
| ໂດລາ/ຢວນ | 6,8768 | 6,8717 | 0,07% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນເພີ່ມຂຶ້ນ 0,02% ຈາກ 53,69 ໂດລາ/ບາເຣວ ມາເປັນ 53,70 ໂດລາ/ບາເຣວ ເນື່ອງຈາກການອ່ອນຄ່າຂອງເງິນໂດລາໃນຕະຫຼາດສາກົນ. ສ່ວນລາຄາຄຳເພີ່ມຂຶ້ນ 2,47% ຈາກ 1.184,20 ໂດລາ/ອອນ ມາເປັນ 1.213,46 ໂດລາ/ອອນ ເນື່ອງຈາກຄວາມຕ້ອງການຖືຄອງຄຳຂອງໂລກ ເພີ່ມຂຶ້ນ 2% ຈາກ 918,7 ໂຕນ ໃນປີ 2015 ມາເປັນ 1.561,1 ໂຕນ ໃນປີ 2016 ເຊິ່ງເຫັນວ່າຄວາມຕ້ອງການຖືຄອງຄຳເພີ່ມຂຶ້ນຢູ່ໃນລະດັບທີ່ສູງທີ່ສຸດໃນຮອບ 4 ປີ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າ 0,1% ແຕ່ອ່ອນຄ່າລົງ 0,25% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,79% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 3,68% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 23-27/01/2016 | | | ອາທິດນີ້ 30/1/-03/2/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.306,74 | 8.357,95 | 8.334,02 | 8.309,20 | 8.352,33 | 8.325,91 | -0,03% | 0,07% | 0,1% | -1,90% | -1,73% | -1,79% |
| ບາດ | 235,84 | 236,73 | 237,25 | 235,98 | 238,05 | 237,33 | -0,06% | -0,34% | -0,25% | -3,52% | -3,81% | -3,68% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,48% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 8,05%;
- ປະລິມານເງິນ M2 ຫຼຸດລົງ 0,21% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,94%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທີ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (27/01/-02/02/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 8,54 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 42,40 ລ້ານໂດລາ ແລະ ຂາຍໂດລາໄດ້ 50,57 ລ້ານໂດລາ) ແລະ ຊື້-ຂາຍເງິນບາດສຸດທິ 739,47 ລ້ານບາດ (ໃນນີ້ ຊື້ບາດໄດ້ 154,36 ລ້ານບາດ ແລະ ຂາຍບາດໄດ້ 893,83 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 22,20% ແຕ່ ສຳລັບເງິນບາດຫຼຸດລົງ 40,47%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 23,75 ລ້ານໂດລາ ແລະ ສຳລັບເງິນບາດແມ່ນບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,81 ລ້ານໂດລາສະຫະລັດ ແລະ ເງິນບາດ 67,79 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 20-26/1/2017 | | ອາທິດທີ 27/1/-2/2/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **51,59** | **308,63** | **42,40** | **154,36** | **-17,81%** | **49,99%** |
| - ທ/ຄທຸລະກິດລັດ | 11,37 | 116,03 | 15,46 | 150,45 | -35,97% | 29,66% |
| - ທ/ຄທຸລະກິດອື່ນໆ | 40,22 | 192,60 | 26,94 | 3,91 | -33,02% | 97,97% |
| **2. ການຂາຍເງິນຕາຕ່າງປະເທດ** | **24,49** | **1.452,05** | **50,57** | **893,83** | **106,49%** | **-38,44%** |
| - ທ/ຄທຸລະກິດລັດ | 15,53 | 113,02 | 13,75 | 285,31 | -11,46% | 152,44% |
| - ທ/ຄທຸລະກິດອື່ນໆ | 8,96 | 1.339,03 | 36,82 | 608,52 | 310,94% | -54,56% |
| **ຊື້-ຂາຍສຸດທິ ທທກ** | **27,10** | **-1.143,42** | **8,17** | **-739,47** | **-130,15%** | **-35,33%** |
| - ຜິດດ່ຽງ ຊື້-ຂາຍ | 52,53% | -370,48% | -19,27% | -479,06% | -136,68% | -29,31% |
| - ມູນຄ່າການຊື້-ຂາຍ | **76,08** | **1.760,68** | **92,97** | **1.048,19** | **22,20%** | **-40,47%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-5,40** | **-149,90** | **-23,75** | **0** | | |
| - ທຫລ ຊື້ຈາກ ທທກ | 3,00 | 0,00 | 0 | 0 | | |
| - ທຫລ ຂາຍໃຫ້ ທທກ | 8,40 | 149,90 | 23,75 | 0 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **2,15** | **2,00** | **0,81** | **67,79** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,32** | **0,00** | **0** | **0** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,32 | 0,00 | 0 | 0 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0 | 0 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 01/2017 ຕົວເລກຄາດຄະເນ 2,84% ເພີ່ມຂຶ້ນຈາກ 2,49% ໃນເດືອນ 12/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກປະເທດ ຫຼຸດລົງ 77,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 37,70 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 826 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 130 ສະບັບ ເທົ່າກັບ 18,67% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 325,97 ຕື້ກີບ ຫຼຸດລົງ 166,06 ຕື້ກີບ ເທົ່າກັບ 66,62% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (27/01/-02/2/2017) ມີທັງໝົດ 2.143 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.111 ຄັ້ງ ລວມມູນຄ່າໃນໂອນທັງໝົດ 640, 24 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 92,88 ຕື້ກີບ ເທົ່າກັບ 16,96%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 32 ຄັ້ງ, ມູນຄ່າການໂອນ 200,15 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ ທີ່ 1.057,21 ຈຸດ ເພີ່ມຂຶ້ນ 0,07% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 40.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 206,22 ລ້ານກີບ ຫຼຸດລົງ 98,51% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 18,57% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 23-27/1/2017 | ດັດຊະນີອາທິດທີ 30/1/-03/2/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.056,50 | 1.057,21 | 0,07% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 2.400 | 13.000.000 | 6.003 | 15.400 | 86.920.000 | 5.644 | 541,67 | 568,62 | 227 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 2.759.100 | 13.805.995.000 | 5.440 | 22.200 | 111.300.000 | 5.014 | -99,20 | -99,19 | 10 |
| ບໍລິສັດລາວເວີນມະຫາຊົນ | 0 | 0 | 5.777 | 0 | 0 | 5.800 | - | - | - |
| ບໍລິສັດປີໂຕລ້ຽມເທຣດ ດີ້ງລາວມະຫາຊົນ | 4.100 | 10.250.000 | 2.500 | 1.000 | 2.450.000 | 2.450 | -75,61 | -76,10 | -50 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | 1.500 | 4.250.000 | 2.800 | 1.800 | 5.550.000 | 3.083 | 20 | 31 | 283 |
| ທັງໝົດ | **2.767.100** | **13.833.495.000** | | **40.400** | **206.220.000** | | -98,54 | -98,51 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- **ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ປະຈຳເດືອນກຸມພາ 2017, ❷ ກອງປະຊຸມຮ່ວມລະຫວ່າງກົມນະໂຍບາຍເງິນຕາ ກັບ ກົມບໍລິການ, ❸ ກອງປະຊຸມພົບປະລະຫວ່າງ ກົມຄຸ້ມຄອງທະນາຄານທຸລະກິດ ກັບ ທະນາຄານທຸລະກິດປະຈຳປີ, ແລະ ❹ ກອງປະຊຸມພົບປະກັບທະນາຄານ ພັດທະນາລາວ, ທະນາຄານສົ່ງເສີມກະສິກຳ ແລະ ທະນາຄານນະໂຍບາຍ ເພື່ອປຶກສາຫາລືກ່ຽວກັບການຊຸກຍູ້ສິນເຊື່ອກະສິກຳ ຢູ່ແຂວງຄຳມ່ວນ.
- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມ ແລະ ສາມະນາກ່ຽວກັບ "ການຈັດຕັ້ງປະຕິບັດການນຳຮອຍ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອພັດທະນາເສດຖະກິດ ແລະ ສັງຄົມໃນຂົງເຂດອາຊີຕາເວັ້ນອອກສ່ຽງໃຕ້ ຂອງສົນທິສັນຍາ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງຂອງອົງການສະຫະປະຊາຊາດ" ຊຶ່ງຈັດຂຶ້ນໃນລະຫວ່າງ

ວັນທີ 30/01/-03/02/2017 ທີ່ (ປະເທດໄທ), ❷ ກອງປະຊຸມລະຫວ່າງ ທຫລ ກັບ ກົມການເງິນ (ກະຊວງການເງິນ) ເພື່ອປຶກສາຫາລືກ່ຽວກັບການຂໍອະນຸມັດນໍາເຂົ້າພາຫະນະ ໃນແຜນການຈັດຊື້ ສົກປີ 2015-2016 ເພື່ອມາຮັບໃຊ້ວຽກງານໂຄງການການເງິນຈຸລະພາກການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກຢູ່ ສປປ ລາວ ໃນວັນທີ 01/02/2017.

- ຮັບຕ້ອນການເຂົ້າຢ້ຽມຂໍ່ານັບຄະນະນໍາຂອງ ທຫລ ໂດຍ ທ່ານ ເລໂອ ຟາແບັກ; ທູດສະຫະພາບເອີຣົບປະຈາ ສປປ ລາວ; ຜູ້ບໍລິຫານຂອງບໍລິສັດໄຟຟ້າຫົງສາ ແລະ ແຂກຈາກປະເທດລັດເຊຍ.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.
- **ກະກຽມຈັດກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກອງປະຊຸມຮ່ວມກັນລະຫວ່າງກົມນະໂຍບາຍເງິນຕາ ແລະ ກົມບໍລິການ ກ່ຽວກັບວຽກງານປະລິມານເງິນ ທີ່ (ທຫລ); ❷ ກອງປະຊຸມສໍາມະນາຮ່ວມກັນລະຫວ່າງ ທຫລ ແລະ ກອງທຶນສາກົນ ກ່ຽວກັບວຽກງານຄຸ້ມຄອງເສດຖະກິດມະຫາພາກໃຫ້ແກ່ການນໍາຂັ້ນສູງຂອງ ສປປ ລາວ ທີ່ (ໂຮງແຮມລາວພາຊາ); ❸ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍການຊໍາລະສະສາງແຫ່ງຊາດທີ່ (ທຫລ); ແລະ ❹ ກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າວິທີການຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ);
- **ກະກຽມກອງປະຊຸມ ແລະ ເຂົ້າຮ່ວມສໍາມະນາຕ່າງໆ:** ❶ ກອງປະຊຸມຂະບວນວຽກງານເຊື່ອມໂຍງຂອງຂະແໜງການເງິນ-ເງິນຕາອາຊຽນໃນລະຫວ່າງວັນທີ 6-11 ກຸມພາ 2017 ທີ່ (ປະເທດຟີລິບປິນ); ❷ ກອງປະຊຸມກ່ຽວກັບການອອກແບບກິດຈະກໍາສິນເຊື່ອຊີນນະບົດຂອງໂຄງການລ້ຽງສັດເພື່ອຜະລິດເປັນສິນຄ້າຢູ່ພາກເໜືອຂອງ ສປປ ລາວ ຮ່ວມກັບທີມງານຜູ້ໃຫ້ທຶນ IFAD ຊຶ່ງຈະຈັດຂຶ້ນໃນວັນທີ 26/02/2017 ທີ່ (ຫ້ອງປະຊຸມພະແນກກະສິກໍາ ແລະ ປ່າໄມ້, ແຂວງຫຼວງພະບາງ).
- ຄະນະຜູ້ວ່າການລົງເຄື່ອນໄຫວວຽກງານທາງລັດຖະການຢູ່ທ້ອງຖິ່ນຢູ່ແຂວງຈໍາປາສັກລະຫວ່າງ ວັນທີ 9-11 ກຸມພາ 2017;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ອົງການສະຫະປະຊາຊາດ ເພື່ອພັດທະນາທຶນ; ທ່ານຫົວໜ້າໂຄງການເຂດເສດຖະກິດພິເສດ ແລະ ປະທານບໍລິສັດ BNK Capital ສ.ເກົາຫຼີ ທີ່ (ທຫລ).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ**

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ